**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມຊັບສິນທາງປັນຍາ

ເລກທີ ........955........ /ກຊປ

ນະຄອນຫຼວງວຽງຈັນ, ວັນທີ ...12... ກັນຍາ 2025

# ໜັງສືສະເໜີ

**ຮຽນ:** ..............................................................................................

**ເລື່ອງ:** ປະກອບຄຳເຫັນໃສ່ຮ່າງຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງອົງການລິຂະສິດລວມໝູ່.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມຊັບສິນທາງປັນຍາ ສະບັບເລກທີ 2001/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ກອງປະຊຸມທາບທາມຄຳເຫັນໃສ່ຮ່າງຂໍ້ຕົກລົງວ່າດ້ວຍ ການສ້າງຕັ້ງອົງການລິຂະສິດລວມໝູ່ ໃນຄັ້ງວັນທີ 28 ສິງຫາ 2025.

ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຮຽນມາຍັງທ່ານຊາບວ່າ: ປະຈຸບັນ ກົມຊັບສິນທາງປັນຍາ ກຳລັງດຳເນີນການສ້າງຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງອົງການລິຂະສິດໝູ່ ເພື່ອເປັນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍສະເພາະ ມາດຕາ 115, 116 ແລະ 117. ຜ່ານມາ, ກົມຊັບສິນທາງປັນຍາ ໄດ້ຈັດກອງປະຊຸມທາບທາມຄຳເຫັນ ໃສ່ຮ່າງຂໍ້ຕົກລົງດັ່ງກ່າວ ໃນຂັ້ນສູນກາງກັບພາກສ່ວນທີ່ກ່ຽວຂ້ອງ ແລະ ພາກທຸລະກິດ ແລະ ປະຈຸບັນ ໄດ້ປັບປຸງຮ່າງເບື້ອງຕົ້ນຕາມຄຳສະເໜີໃນທີ່ປະຊຸມ (ຮ່າງຂໍ້ຕົກລົງໄດ້ຄັດຕິດມາພ້ອມນີ້).

ສະນັ້ນ, ກົມຊັບສິນທາງປັນຍາ ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອຂໍຄຳເຫັນເພີ່ມເຕີມປະກອບໃສ່ຮ່າງຂໍ້ຕົກລົງດັ່ງກ່າວ ໂດຍສະເພາະຈຸດທີ່ຕິດພັນກັບຄວາມຮັບຜິດຊອບຂອງຂະແໜງການທ່ານ ເພື່ອໃຫ້ມີເນື້ອໃນຄົບຖ້ວນສົມບູນ, ເປັນໄປຕາມຂັ້ນຕອນການສ້າງນິຕິກຳ ແລະ ສາມາດຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນຕາມຄາດໝາຍ ພາຍຫຼັງຮ່າງຂໍ້ຕົກລົງດັ່ງກ່າວຖືກຮັບຮອງ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ໄຊສົມເພັດ ນໍລະສິງ

ກະລຸນາແຈ້ງຕອບ

ພາຍໃນວັນທີ 23 ກັນຍາ 2025

ຕິດຕໍ່: ນ. ເກີດມານີ **55464541**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ /ອຄ

ນະຄອນຫຼວງວຽງຈັນ, ວັນທີ...............

# ຂໍ້ຕົກລົງ
# ວ່າດ້ວຍ ການ~~ອະນຸຍາດ~~ສ້າງຕັ້ງ ອົງການລິຂະສິດລວມໝູ່

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 15 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ ......../ກຄຊປ, ລົງວັນທີ .......................

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ຂັ້ນຕອນ ກ່ຽວກັບການຄຸ້ມຄອງ ~~ການອະນຸຍາດ~~ ກ່ຽວກັບການ ສ້າງຕັ້ງ ແລະ ການ ເຄື່ອນໄຫວ ຂອງອົງການລິຂະສິດລວມໝູ່ ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບ ອົງການລິຂະສິດລວມໝູ່ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ເປັນການປະກອບສ່ວນເຂົ້າ ໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ທັນເປັນອຸດສາຫະກຳ ແລະ ທັນສະໄໝ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ອົງການລິຂະສິດລວມໝູ່

ອົງການລິຂະສິດລວມໝູ່ ແມ່ນການຈັດຕັ້ງ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເອີ້ນຊື່ສາກົນວ່າ "Collective Management Organization: CMO" ທີ່ສ້າງຕັ້ງຂຶ້ນຕາມການຕົກລົງເຫັນດີພາຍໃນກຸ່ມຂອງ

ບັນດາເຈົ້າຂອງຜົນງານ, ເຈົ້າຂອງລິຂະສິດ, ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ, ເພື່ອປົກປ້ອງ, ຄຸ້ມຄອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດຂອງຕົນ ແລະ ດໍາເນີນກິດຈະກໍາຕ່າງໆເປັນຕົ້ນ ເຈລະຈາການອະນຸຍາດນໍາໃຊ້ຜົນງານ, ເກັບຄ່າຕອບແທນ, ແບ່ງປັນ ແລະ ແຈກຢາຍຄ່າລິຂະສິດ, ປົກປ້ອງສິດ ແລະ ຜົນປະໂຫຍດທາງດ້ານກົດໝາຍຂອງສະມາຊິກ ລວມທັງເປັນຕົວແທນໃນການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການດໍາເນີນຄະດີ ໃນນາມຂອງບຸກຄົນເຫຼົ່ານັ້ນ.

**ມາດຕາ 3 ການອະທິບາຍສັບ**

ຄໍາສັບ ທີ່ນໍາໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ເຈົ້າຂອງສິດ**

***1.1 ກໍລະນີລິຂະສິດ*** ໝາຍເຖິງ ຜູ້ປະດິດຄິດແຕ່ງ ຫຼື ບຸກຄົນທີ່ໄດ້ຮັບການໂອນສິດ ຫຼື ສືບທອດຜົນປະໂຫຍດຈາກຜູ້ປະດິດຄິດແຕ່ງ ຫຼື ສືບທອດມູນມໍລະດົກ ຫຼື ບຸກຄົນອື່ນທີ່ໄດ້ຮັບສິດຕາມກົດໝາຍ;

***1.2 ກໍລະນີສິດກ່ຽວຂ້ອງກັບລິຂະສິດ*** ໝາຍເຖິງ ຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ ຫຼື ຜູ້ກະຈາຍສຽງ-ແຜ່ພາບ ຫຼື ບຸກຄົນທີ່ໄດ້ຮັບການໂອນສິດ ຫຼື ສືບທອດຜົນປະໂຫຍດ ຫຼື ສືບທອດມູນມໍລະດົກ ຫຼື ບຸກຄົນອື່ນທີ່ໄດ້ຮັບສິດຕາມກົດໝາຍ.

**2. ຄ່າລິຂະສິດ ຫຼື ຄ່າຕອບແທນ** ໝາຍເຖິງ ເງິນທີ່ໄດ້ຮັບຈາກການຊໍາລະ ຄ່ານໍາໃຊ້ຜົນງານ ເພື່ອແບ່ງປັນໃຫ້ແກ່ເຈົ້າຂອງສິດ.

**3. ສັນຍາຮ່ວມມື** ໝາຍເຖິງ ການຕົກລົງ ລະຫວ່າງ ອົງການລິຂະສິດລວມໝູ່ ຢູ່ ສປປ ລາວ ແລະ ຢູ່ຕ່າງປະ ເທດ ໃນການມອບໝາຍສິດໃຫ້ເປັນຕົວແທນໃນການອະນຸຍາດ ຈັດເກັບຄ່າລິຂະສິດ ຫຼື ຄ່າຕອບແທນ ໃນປະເທດທີ່ຕົນດໍາເນີນການຢູ່.

**4. ໃບອະນຸຍາດ** ໝາຍເຖິງ ການອະນຸຍາດໃຫ້ສ້າງຕັ້ງເປັນອົງການລິຂະສິດລວມໝູ່ ທີ່ອອກໃຫ້ໂດຍກົມຄຸ້ມຄອງຊັບສິນທາງປັນຍາ

**5. ກຸ່ມນິຕິບຸກຄົນ** ແມ່ນ ການລວມຕົວກັນຂອງຫຼາຍນິຕິບຸກຄົນ ທີ່ເປັນເຈົ້າຂອງສິດ .

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບກຸ່ມ ຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານອົງການລິຂະສິດລວມໝູ່ ຢູ່ ສປປລາວ.

**ມາດຕາ 54-ຜູ້ທີ່ມີສິດຍື່ນຄາຮ້ອງຂໍສ້າງຕັ້ງ ເປັນອົງການລິຂະສິດລວມໝູ່**

ກຸ່ມຄົນ ຫຼື ກຸ່ມນິຕິບຸກຄົນ ທີ່ເປັນເຈົ້າຂອງສິດ ແລະ ເປັນພົນລະເມືອງລາວ ມີທີ່ຢູ່ອາໄສຢູ່ ສປປ ລາວ ທີ່ມີຈຸດປະສົງຢາກດໍາເນີນການເປັນອົງການລິຂະສິດລວມໝູ່ ສາມາດຍື່ນຄໍາຮ້ອງຂໍອະນຸຍາດສ້າງຕັ້ງ ແລະ ດໍາເນີນການເຄື່ອນໄຫວ ນໍາກົມຄຸ້ມຄອງຊັບສິນທາງປັນຍາ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້.

# ໝວດທີ II
# ການອະນຸຍາດສ້າງຕັ້ງເປັນອົງການລິຂະສິດລວມໝູ່

**ມາດຕາ 6~~5~~ ຂັ້ນຕອນການຂໍອະນຸຍາດສ້າງຕັ້ງ ອົງການລິຂະສິດລວມໝູ່**

ການຂໍອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່ ມີ 4 ຂັ້ນຕອນ ດັ່ງນີ້:

1. ການສ້າງຕັ້ງເປັນ ກຸ່ມຄົນ ຫຼື ກຸ່ມນິຕິບຸກຄົນ ທີ່ເປັນເຈົ້າຂອງສິດ;
2. ການສະເໜີ ຈັດກອງປະຊຸມໃຫຍ່ສ້າງຕັ້ງອົງການລິຂະສິດລວມໝູ່;
3. ການສະເໜີ ຮັບຮອງເອົາ ກົດລະບຽບ ແລະ ຄະນະບໍລິຫານ ຂອງອົງການລິຂະສິດລວມໝູ່;
4. ການຍື່ນຄຳຮ້ອງ ຂໍອະນຸຍາດສ້າງຕັ້ງເປັນອົງການຈັດຕັ້ງລິຂະສິດລວມໝູ່.

**ມາດຕາ 7~~6~~ ສ້າງຕັ້ງເປັນກຸ່ມຄົນ ຫຼື ກຸ່ມນິຕິບຸກຄົນ ທີ່ເປັນເຈົ້າຂອງສິດ**

ເຈົ້າຂອງສິດ ທີ່ເປັນພົນລະເມືອງລາວ ແລະ ມີທີ່ຢູ່ອາໃສຢູ່ ສປປ ລາວ ສາມາດລວມຕົວກັນເປັນກຸ່ມຄົນ ຫຼື ກຸ່ມນິຕິບຸກຄົນ ເພື່ອເປັນຕົວແທນໃນການດຳເນີນການຕ່າງໆກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດທາງດ້ານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ອັນຊອບທຳຂອງຕົນ ພາຍໃຕ້ກົດໝາຍວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 8~~7~~ ການສະເໜີ ຈັດກອງປະຊຸມໃຫຍ່ສ້າງຕັ້ງອົງການລິຂະສິດລວມໝູ່**

1. ກຸ່ມຄົນ ຫຼື ກຸ່ມນິຕິບຸກຄົນ ໃດໜຶ່ງ ທີ່ຕ້ອງການສ້າງຕັ້ງເປັນ ອົງການລິຂະສິດລວມໝູ່ ຕ້ອງຍື່ນເອກະສານຢູ່ນຳກົມຄຸ້ມຄອງຊັບສິນທາງປັນຍາ ດັ່ງລຸ່ມນີ້:

1.1 ໜັງສືສະເໜີ ຂໍອະນຸມັດເປີດກອງປະຊຸມໃຫຍ່ສ້າງຕັ້ງອົງການລິຂະສິດລວມໝູ່;

1.2 ຮ່າງກົດລະບຽບຂອງອົງການລິຂະສິດລວມໝູ່;

1.3 ຮ່າງໂຄງຮ່າງການຈັດຕັ້ງ;

1.4 ຮ່າງແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານຂອງອົງການລິຂະສິດລວມໝູ່;

1.5 ບັນຊີລາຍຊື່ສະມາຊິກ;

1.6 ປະຫວັດຂອງຄະນະບໍລິຫານຂອງກຸ່ມຄົນ ຫຼື ກຸ່ມນິຕິບຸກຄົນ ແລະ ພະນັກງານ;

1.7 ໃບຢັ້ງຢືນທີ່ຕັ້ງຂອງສຳນັກງານ.

ພາຍຫຼັງເອກະສານຄົບຖ້ວນ ກົມຄຸ້ມຄອງຊັບສິນທາງປັນຍາຕ້ອງພິຈາລະນາ ແລະ ອອກແຈ້ງການໃຫ້ຈັດກອງປະຊຸມ ພາຍໃນເວລາ ຫ້າ ວັນລັດຖະການ.

2. ການດຳເນີນກອງປະຊຸມສ້າງຕັ້ງເປັນອົງການລິຂະສິດລວມໝູ່

ກຸ່ມຄົນ ຫຼື ກຸ່ມນິຕິບຸກຄົນ ຕ້ອງກະກຽມຈັດກອງປະຊຸມຂຶ້ນ ພາຍໃນ ເກົ້າສິບວັນ ນັບແຕ່ມື້ອອກແຈ້ງການໃຫ້ຈັດກອງປະຊຸມສ້າງຕັ້ງອົງການລິຂະສິດລວມໝູ່.

ກອງປະຊຸມສ້າງຕັ້ງ ອົງການລິຂະສິດລວມໝູ່ ເປີດຂຶ້ນເພື່ອເຕົ້າໂຮມເອົາບັນດາສະມາຊິກທັງໝົດ ເຂົ້າຮ່ວມກອງປະຊຸມໃຫຍ່ ຊຶ່ງມີເນື້ອໃນການດຳເນີນກອງປະຊຸມ ດັ່ງນີ້:

2.1 ຜ່ານແຈ້ງການ ໃຫ້ຈັດກອງປະຊຸມ ສ້າງຕັ້ງອົງການລິຂະສິດລວມໝູ່;

2.2 ຜ່ານຮ່າງກົດລະບຽບ;

2.3 ມີການລົງຄະແນນສຽງ ເລືອກຕັ້ງຄະນະບໍລິຫານ, ຄະນະກວດກາ ແລະ ຕໍາແໜ່ງ ອື່ນໆທີ່ຈໍາເປັນ;

2.4 ຜ່ານແຜນການເຄື່ອນໄຫວ ຫຼື ແຜນດໍາເນີນງານ.

**ມາດຕາ 98 ການຮັບຮອງເອົາ ກົດລະບຽບ ແລະ ຄະນະບໍລິຫານ ຂອງອົງການລິຂະສິດລວມໝູ່**

ພາຍໃນສາມສິບວັນຫຼັງຈາກຈັດກອງປະຊຸມສ້າງຕັ້ງອົງການລິຂະສິດລວມໝູ່ ຄະນະຮັບຜິດຊອບຕ້ອງປະກອບເອກະສານ ແລ້ວສະເໜີຕໍ່ກົມຄຸ້ມຄອງຊັບສິນທາງປັນຍາ ເພື່ອຮັບຮອງ ເອກະສານ ດັ່ງນີ້:

1. ໜັງສືສະເໜີ ການຮັບຮອງເອົາ ກົດລະບຽບ, ຄະນະບໍລິຫານ ແລະ ຄະນະກວດກາ;
2. ສັດຕິດບົດລາຍງານກອງປະຊຸມ, ຜົນການເລືອກຕັ້ງຄະນະບໍລິຫານ ແລະ ຄະນະກວດກາ, ຮ່າງກົດລະບຽບ, ແຜນດໍາເນີນງານ, ມະຕິກອງປະຊຸມ, ໃບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມ;

ພາຍຫຼັງເອກະສານຄົບຖ້ວນ ກົມຄຸ້ມຄອງຊັບສິນທາງປັນຍາຕ້ອງພິຈາລະນາ ແລະ ອອກໃບຮັບຮອງກົດລະບຽບ, ຄະນະບໍລິຫານງານ ແລະ ຄະນະກວດກາອົງການລິຂະສິດລວມໝູ່ ພາຍໃນເວລາ ສິບຫ້າ ວັນລັດຖະການ.

~~**ມາດຕາ 9 ການຍື່ນຄໍາຮ້ອງຂໍອະນຸຍາດສ້າງຕັ້ງເປັນອົງການຈັດຕັ້ງລິຂະສິດລວມໝູ່**~~

~~ຜູ້ຮ້ອງຂໍອະນຸຍາດສ້າງຕັ້ງ ຕ້ອງຍື່ນສໍານວນຄໍາຮ້ອງຢູ່ກົມຄຸ້ມຄອງຊັບສິນທາງປັນຍາຕາມແບບພິມ ຂອງກົມຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.~~

**ມາດຕາ 10 ເງື່ອນໄຂທີ່ສາມາດໄດ້ຮັບການອະນຸຍາດສ້າງຕັ້ງອົງການລິຂະສິດລວມໝູ່**

ການສ້າງຕັ້ງເປັນອົງການລິຂະສິດລວມໝູ່ມີເງື່ອນໄຂດັ່ງນີ້:

1. ເປັນການຈັດຕັ້ງທີ່ບໍ່ຫວັງຜົນກໍາໄລ;
2. ມີສະມາຊິກຈໍານວນຫຼາຍທີ່ເປັນຕົວແທນເຈົ້າຂອງສິດທັງໝົດຢູ່ ສປປ ລາວ;
3. ມີໂຄງຮ່າງການຈັດຕັ້ງທີ່ປະກອບດ້ວຍ ຄະນະບໍລິຫານງານ, ຄະນະກວດກາ, ຜູ້ອໍານວຍການ, ສະມາຊິກ, ນັກກົດໝາຍ ແລະ ພະນັກງານຕໍາແໜ່ງອື່ນ ທີ່ກໍານົດໃນກົດລະບຽບຂອງອົງການລິຂະສິດລວມໝູ່, ຊຶ່ງຄະນະບໍລິຫານຂອງອົງການລິຂະສິດລວມໝູ່ ຕ້ອງມີຕົວແທນຈາກແຕ່ລະປະເພດສິດທີ່ເປັນສະມາຊິກຂອງອົງການລິຂະສິດລວມໝູ່ ເພື່ອໃຫ້ມີຄວາມສົມດຸນ ແລະ ຍຸຕິທໍາ ທາງດ້ານຜົນປະໂຫຍດຂອງສະມາຊິກ.
4. ຜູ້ອໍານວຍການ ລວມທັງພະນັກງານຂອງອົງການລິຂະສິດລວມໝູ່ ທີ່ຮັບຜິດຊອບກ່ຽວກັບເອກະສານ, ການອະນຸຍາດນໍາໃຊ້, ການແຈກຢາຍຄ່າຕອບແທນ ແລະ ການເງິນ ຈະຕ້ອງ:

1) ຜ່ານການຝຶກອົບຮົມກ່ຽວກັບລິຂະສິດ ຫຼື ຫົວຂໍ້ທີ່ກ່ຽວຂ້ອງ ຫຼື ມີຄວາມຮູ້ພື້ນຖານດ້ານລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຈາກກົມຄຸ້ມຄອງຊັບສິນທາງປັນຍາ ຫຼື ສະຖາບັນອື່ນໆ ຫຼື ໄດ້ເຂົ້າຮ່ວມສໍາມະນາຢູ່ທັງພາຍໃນ ແລະ ຕ່າງປະເທດ;

2) ມີຄວາມຮູ້ຄວາມສາມາດ ແລະ ປະສົບການ ທາງດ້ານການບໍລິຫານ;

3) ບໍ່ມີຜົນປະໂຫຍດທັບຊ້ອນ ຫຼື ສ່ວນໄດ້ສ່ວນເສຍ ກັບຜູ້ນໍາໃຊ້ຜົນງານ ແລະ ສະມາຊິກຂອງອົງການລິຂະສິດລວມໝູ່.

5. ມີຄະນະກວດກາທີ່ມີໜ້າທີ່ຕິດຕາມກວດກາຢ່າງໃກ້ຊິດ ກ່ຽວກັບການບໍລິຫານຂອງອົງການລິຂະສິດລວມໝູ່;

6. ມີລະບົບບັນຊີທີ່ໄດ້ຮັບຢັ້ງຢືນຈາກໜ່ວຍງານກວດສອບບັນຊີພາຍນອກ;

7. ໃນລະບຽບການ ຕ້ອງມີກົນໄກເພື່ອແກ້ໄຂຂໍ້ຂັດແຍ່ງພາຍໃນ ລະຫວ່າງບັນດາສະມາຊິກຂອງອົງການລິຂະສິດລວມໝູ່ ກ່ຽວກັບການອະນຸຍາດໃຫ້ຄຸ້ມຄອງສິດ, ການຍົກເລີກ ຫຼື ຖອດຖອນການເປັນສະມາຊິກ, ການແບ່ງປັນຄ່າຕອບແທນໃຫ້ສະມາຊິກ, ຄ່າບໍລິຫານ ແລະ ອື່ນໆ.

**ມາດຕາ 11 ອົງການລິຂະສິດລວມໝູ່ທີ່ອະນຸຍາດໃຫ້ສ້າງຕັ້ງຢູ່ ສປປ ລາວ**

ອົງການລິຂະສິດລວມໝູ່ ແມ່ນອະນຸຍາດໃຫ້ສ້າງຕັ້ງແຕ່ອົງການດຽວຕໍ່ໜຶ່ງປະເພດຂອງຜົນງານ ຫຼື ສິດ ດັ່ງນີ້:

1) ດົນຕີ-ການບັນທຶກສຽງ;
2) ວັນນະກຳ;
3) ການສະແດງ;
4) ການບັນທຶກສຽງ-ພາບ;
5) ການກະຈາຍສຽງ-ແຜ່ພາບ;
6) ວິຈິດສິນ.

**ມາດຕາ 12 ການຍື່ນສຳນວນຄຳຮ້ອງ ຂໍອະນຸຍາດສ້າງຕັ້ງເປັນອົງການລິຂະສິດລວມໝູ່**

ຜູ້ຮ້ອງຂໍສາມາດຍື່ນສຳນວນຄຳຮ້ອງຢູ່ກົມຄຸ້ມຄອງຊັບສິນທາງປັນຍາ ແລະ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຕາມແບບພິມ ຂອງກົມ;

2. ເອກະສານທີ່ກຳນົດປະເພດສິດ ຫຼື ປະເພດຂອງເຈົ້າຂອງສິດ ທີ່ອົງການລິຂະສິດລວມໝູ່ຈະເປັນຕົວແທນຄຸ້ມຄອງ;

3. ເອກະສານກ່ຽວກັບການກຳນົດອັດຕາການເກັບຄ່າລິຂະສິດ ແລະ ແຈກຢາຍຄ່າ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຂອງແຕ່ລະປະເພດສິດທີ່ອົງການເປັນຕົວແທນຄຸ້ມຄອງ;

4. ສັນຍາ ກ່ຽວກັບ ການຮ່ວມມືລະຫວ່າງ ອົງການຈັດຕັ້ງລິຂະສິດລວມໝູ່ ແລະ ອົງການລິຂະສິດລວມໝູ່ຕ່າງປະເທດ (ຖ້າມີ);

5. ບົດລາຍງານບັນຊີປະຈຳປີທີ່ຜ່ານການກວດສອບຈາກອົງການກວດສອບບັນຊີພາຍນອກ (ໃນກໍລະນີທີ່ມີການດຳເນີນການມາກ່ອນແລ້ວ);

6. ຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 13~~12~~ ການພິຈາລະນາຄຳຮ້ອງຂໍອະນຸຍາດສ້າງຕັ້ງເປັນອົງການລິຂະສິດລວມໝູ່**

ພາຍຫຼັງຮັບຄຳຮ້ອງຂໍອະນຸຍາດສ້າງຕັ້ງເປັນອົງການລິຂະສິດລວມໝູ່ຄົບຖ້ວນຕາມທີ່ໄດ້ລະບຸໄວ້ໃນມາດຕາ 10 ແລະ 11 ຂອງຂໍ້ຕົກລົງສະບັບນີ້ແລ້ວ ກົມຄຸ້ມຄອງຊັບສິນທາງປັນຍາຕ້ອງດຳເນີນການພິຈາລະນາ ອອກໃບອະນຸຍາດສ້າງຕັ້ງເປັນອົງການລິຂະສິດລວມໝູ່ ພາຍໃນກຳນົດເວລາ ສິບຫ້າວັນ ລັດຖະການ.

ໃນກໍລະນີ ຂໍ້ມູນບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕາມຂໍ້ກຳນົດໃນມາດຕາ 10 ແລະ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້, ກົມຄຸ້ມຄອງຊັບສິນທາງປັນຍາຕ້ອງອອກແຈ້ງການເພື່ອໃຫ້ຜູ້ຍື່ນຄຳຮ້ອງສະໜອງຂໍ້ມູນເພີ່ມເຕີມພາຍໃນເວລາ ສິບວັນລັດຖະການ, ຖ້າກາຍເວລາທີ່ກຳນົດໄວ້ ກົມຈະຖືວ່າຄຳຮ້ອງດັ່ງກ່າວຖືກຍົກເລີກໂດຍຜູ້ຮ້ອງຂໍ.

ໃບອະນຸຍາດສ້າງຕັ້ງເປັນ ອົງການລິຂະສິດລວມໝູ່ ຈະມີຜົນບັງຄັບໃຊ້ເປັນເວລາຫ້າປີ ນັບແຕ່ວັນອອກໃບອະນຸຍາດເປັນຕົ້ນໄປ.

### ມາດຕາ 14~~13~~ ການບັນທຶກຂໍ້ມູນອົງການລິຂະສິດລວມໝູ່

ພາຍຫຼັງອອກໃບອະນຸຍາດແລ້ວ ກົມຕ້ອງບັນທຶກຂໍ້ມູນທີ່ກ່ຽວຂ້ອງລົງໃນຖານຂໍ້ມູນຂອງກົມ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບໃບອະນຸຍາດ ລົງໃນເວັບໄຊ້ຂອງກົມ.

## ໝວດທີ III
## ການດຳເນີນການ ຫຼັງການອອກໃບອະນຸຍາດສ້າງຕັ້ງເປັນອົງການລິຂະສິດລວມໝູ່

### ມາດຕາ 15~~14~~ ການປ່ຽນແປງຂໍ້ມູນຫຼັງການອອກໃບອະນຸຍາດ

ພາຍຫຼັງອອກໃບອະນຸຍາດແລ້ວ ອົງການລິຂະສິດລວມໝູ່ ຫາກມີການປ່ຽນແປງ ຫຼື ດັດແກ້ເອກະສານຕາມກຳນົດໄວ້ຂໍ້ 1.2, 1.3, 1.4 ແລະ 1.6 ຂອງມາດຕາ 07 ແລະ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້ ຕ້ອງແຈ້ງ ແລະ ສະໜອງຂໍ້ມູນ ໃຫ້ກົມຄຸ້ມຄອງຊັບສິນທາງປັນຍາເພື່ອຊາບ ແລະ ບັນທຶກລົງໃນຖານຂໍ້ມູນຂອງກົມ.

### ມາດຕາ 16~~15~~ ການຕໍ່ອາຍຸໃບອະນຸຍາດ

ໃບອະນຸຍາດສ້າງຕັ້ງເປັນ ອົງການລິຂະສິດລວມໝູ່ ສາມາດຕໍ່ອາຍຸໄດ້ ເທື່ອລະຫ້າ ປີ ໂດຍຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸ ພາຍໃນສາມເດືອນກ່ອນວັນສິ້ນສຸດອາຍຸໃບອະນຸຍາດ ແລະ ຕ້ອງຍື່ນສຳນວນເອກະສານສະບັບຫຼ້າສຸດຕາມກຳນົດໄວ້ຂໍ້ 1.2 ຫາ 1.7 ຂອງມາດຕາ 7 ແລະ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

ຖ້າເກີນກຳນົດເວລາຫົກເດືອນ ອົງການລິຂະສິດລວມໝູ່ຕ້ອງປະກອບເອກະສານ ແລະ ດຳເນີນການຂໍອະນຸມັດສ້າງຕັ້ງເປັນອົງການລິຂະສິດລວມໝູ່ຄືນໃໝ່ ຕາມມາດຕາ 7, ມາດຕາ 10 ແລະ ມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

ກົມຄຸ້ມຄອງຊັບສິນທາງປັນຍາ ຕ້ອງຮັບຮອງເອກະສານສະບັບຫຼ້າສຸດ ແລະ ຕໍ່ອາຍຸໃບອະນຸຍາດ ພາຍໃນສິບຫ້າ ວັນລັດຖະການ ຫາກເຫັນວ່າການດຳເນີນງານຂອງອົງການລິຂະສິດລວມໝູ່ມີປະສິດທິພາບໃນການ ຈັດຕັ້ງປະຕິບັດວຽກງານຫ້າປີທີ່ຜ່ານມາ ແລະ ສອດຄ່ອງກັບມາດຕາ 10 ຂອງຂໍ້ຕົກລົງສະບັບນີ້, ແຕ່ຫາກເຫັນວ່າການດຳເນີນງານຫາກບໍ່ມີປະສິດທິພາບ ແລະ ເກີດມີກໍລະນີໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ແມ່ນກົມຈະບໍ່ຕໍ່ອາຍຸໃຫ້.

**ມາດຕາ 17~~16~~ ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ**

ກົມຄຸ້ມຄອງຊັບສິນທາງປັນຍາຕ້ອງໃຊ້ມາດຕະການກ່າວເຕືອນ ເປັນລາຍລັກອັກສອນຕໍ່ອົງການລິຂະສິດລວມໝູ່ ເພື່ອໃຫ້ມີການປັບປຸງຕົນເອງ ຖ້າເຫັນວ່າ ອົງການດັ່ງກ່າວ ມີຂໍ້ຜິດພາດເທື່ອທໍາອິດໃນການປະຕິບັດ ສິດ ແລະ ພັນທະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 20 ແລະ 21 ຂອງຂໍ້ຕົກລົງສະບັບນີ້ ຊຶ່ງບໍ່ສົ່ງຜົນກະທົບໃນວົງກວ້າງ, ມາດຕະການດັ່ງກ່າວອາດລວມເຖິງ ການສຶກສາອົບຮົບ ແລະ ເຮັດບົດບັນທຶກຮ່ວມກັນເພື່ອແກ້ໄຂບັນຫາທີ່ເກີດຂຶ້ນ.

**ມາດຕາ 18~~17~~ ການໂຈະໃບອະນຸຍາດ**

ກົມຄຸ້ມຄອງຊັບສິນທາງປັນຍາຕ້ອງໂຈະໃບອະນຸຍາດສ້າງຕັ້ງເປັນອົງການລິຂະສິດລວມໝູ່ ຖ້າພົບເຫັນ ກໍລະນີໃດໜຶ່ງ ລຸ່ມນີ້:

1. ອົງການລິຂະສິດລວມໝູ່ ປ່ອຍໃຫ້ຄະນະບໍລິຫານ ຫຼື ພະນັກງານຂອງຕົນລະເມີດ ກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງ ທີ່ກ່ຽວຂ້ອງ;

2. ເອກະສານ ຫຼື ຂໍ້ມູນ ໃນການຂໍອະນຸມັດສ້າງຕັ້ງເປັນອົງການລິຂະສິດລວມໝູ່ ແລະ ເອກະສານອື່ນໆທີ່ໄດ້ສະໜອງໃຫ້ກົມ ບໍ່ຖືກຕ້ອງ ຫຼື ບໍ່ມີມູນຄວາມຈິງ;

3. ບໍ່ສາມາດຮັກສາໄດ້ເງື່ອນໄຂການສ້າງຕັ້ງເປັນອົງການລິຂະສິດລວມໝູ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;

4. ບໍ່ສາມາດປະຕິບັດ ສິດ ແລະ ພັນທະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 20 ແລະ 21 ຂອງຂໍ້ຕົກລົງສະບັບນີ້ ພາຍໃນສິບແປດເດືອນ ຫຼັງຈາກທີ່ໄດ້ຮັບການອອກໃບອະນຸຍາດ;

5. ອົງການລິຂະສິດລວມໝູ່ ລະເມີດສັນຍາ ກັບສະມາຊິກ;

6. ສະຫຼຸບບັນຊີ ບໍ່ຖືກຕ້ອງໃຫ້ແກ່ສະມາຊິກ ຫຼື ກົມຄຸ້ມຄອງຊັບສິນທາງປັນຍາ.

ພາຍຫຼັງກົມອອກແຈ້ງການໂຈະໃບອະນຸຍາດສ້າງຕັ້ງ, ກົມຕ້ອງແຈ້ງໃຫ້ອົງການລິຂະສິດລວມໝູ່ຮັບຊາບ ແລະ ປັບປຸງ, ແກ້ໄຂ ຂໍ້ຜິດພາດ ໃຫ້ສໍາເລັດພາຍໃນກໍານົດເວລາໃນສາມສິບວັນລັດຖະການ.

ສໍາລັບໄລຍະເວລາໃນການໂຈະສູງສຸດແມ່ນບໍ່ເກີນຫົກເດືອນ.

**ມາດຕາ 19~~18~~ ການຍື່ນຄໍາຊີ້ແຈງ ຕໍ່ຄໍາສັ່ງໂຈະ**

ອົງການລິຂະສິດລວມໝູ່ ສາມາດຍື່ນຄໍາຊີ້ແຈງ ຫຼື ຄໍາອະທິບາຍ ເຖິງກົມຄຸ້ມຄອງຊັບສິນທາງປັນຍາ ພາຍໃນ ສາມສິບ ວັນລັດຖະການ ນັບແຕ່ອອກຄໍາສັ່ງໂຈະໃບຢັ້ງຢືນການອອກໃບອະນຸຍາດຂອງກົມ ເປັນຕົ້ນໄປ.

ຖ້າກົມເຫັນວ່າຄໍາຊີ້ແຈງມີເຫດຜົນ ກົມຕ້ອງອອກແຈ້ງການຍົກເລີກການໂຈະດັ່ງກາວ ແລະ ແຈ້ງໃຫ້ອົງການລິຂະສິດລວມໝູ່ຊາບພາຍໃນຫ້າວັນລັດຖະການ.

**ມາດຕາ 20~~19~~ ການຍົກເລີກໃບອະນຸຍາດເປັນອົງການລິຂະສິດລວມໝູ່**

ກົມຄຸ້ມຄອງຊັບສິນທາງປັນຍາ ມີສິດຍົກເລີກໃບອະນຸຍາດ ເປັນອົງການລິຂະສິດລວມໝູ່ໃນສອງກໍລະນີ ດັ່ງນີ້:

1. ພາຍຫຼັງສິ້ນສຸດໄລຍະເວລາການໂຈະໃບອະນຸຍາດ;

2. ການພິຈາລະນາໂດຍອີງໃສ່ມາດຕາ 17  ຂອງຂໍ້ຕົກລົງສະບັບນີ້ ຫາກເຫັນວ່າການກະທຳໃດໜຶ່ງໄດ້ສົ່ງ ຜົນກະທົບຮ້າຍແຮງຕໍ່ສັງຄົມ ແລະ ສະມາຊິກ.

ກົມຄຸ້ມຄອງຊັບສິນທາງປັນຍາ ຕ້ອງອອກໜັງສືຍົກເລີກໃບອະນຸຍາດ ແລະ ແຈ້ງໃຫ້ອົງການລິຂະສິດລວມໝູ່ຊາບ. ອົງການລິຂະສິດລວມໝູ່ສາມາດຍື່ນຄຳຊີ້ແຈງເພື່ອໃຫ້ກົມພິຈາລະນາຄືນພາຍໃນກຳນົດເວລາຫົກເດືອນ ນັບແຕ່ວັນອອກໜັງສືຍົກເລີກເປັນຕົ້ນໄປ.

ກົມຄຸ້ມຄອງຊັບສິນທາງປັນຍາ ຕ້ອງເຜີຍແຜ່ຜົນຂອງການຍົກເລີກໃບອະນຸຍາດດັ່ງກ່າວ ລົງໃນເວັບໄຊ້ຂອງກົມ.

## ໝວດທີ IV
## ສິດ ແລະ ພັນທະ ຂອງອົງການລິຂະສິດລວມໝູ່

### ມາດຕາ 21~~20~~ ສິດຂອງອົງການລິຂະສິດລວມໝູ່

ອົງການລິຂະສິດລວມໝູ່ມີສິດດັ່ງນີ້:

1. ສົ່ງເສີມ ແລະ ປົກປ້ອງຜົນປະໂຫຍດຂອງສະມາຊິກຕົນ ໂດຍສະເພາະການອອກອະນຸຍາດໃຫ້ໃຊ້ຜົນງານໂດຍສອດຄ່ອງ ພາຍໃຕ້ຂອບເຂດທີ່ຕົນອະນຸຍາດ ຊຶ່ງກຳນົດໂດຍເຈົ້າຂອງສິດ, ການເກັບ ແລະ ແຈກຢາຍ ຄ່າຕອບແທນ ທີ່ໄດ້ກຳນົດໄວ້ໃນກົດໝາຍຊັບສິນທາງປັນຍາ;

2. ຕິດຕາມ, ກວດກາການນຳໃຊ້, ການປົກປ້ອງສິດ ແລະ ຜົນປະໂຫຍດທາງດ້ານກົດໝາຍໃຫ້ສະມາຊິກ; ເກັບລາຍໄດ້ຈາກການອະນຸຍາດໃຫ້ນຳໃຊ້ ແລະ ໃຊ້ວິທີການທີ່ເໝາະສົມຕໍ່ການອະນຸຍາດນຳໃຊ້ທີ່ຄ້າງຊຳລະ;

3. ເກັບກຳຂໍ້ມູນກ່ຽວກັບຜົນງານ ການສະແດງ, ການບັນທຶກສຽງ ແລະ ການກະຈາຍສຽງ-ແຜ່ພາບ ຂອງຜູ້ໄດ້ຮັບອະນຸຍາດນຳໃຊ້;

4. ແຈກຢາຍລາຍໄດ້ໃຫ້ສະມາຊິກຂອງຕົນຈາກການອອກໃບອະນຸຍາດນຳໃຊ້ ຫຼັງຈາກຫັກຄ່າໃຊ້ຈ່າຍຕ່າງໆ ໂດຍບໍ່ເລືອກປະຕິບັດ;

5. ຮັກສາຂໍ້ມູນການລົງທະບຽນຂອງສະມາຊິກຕົນ ກ່ຽວກັບ ຜົນງານ, ການສະແດງ, ການບັນທຶກສຽງ, ການກະຈາຍສຽງ-ແຜ່ພາບ ແລະ ອື່ນໆ;

6. ເປັນຕົວແທນຮ່ວມມືກັບອົງການລິຂະສິດລວມໝູ່ສາກົນ;

7. ອຳນວຍຄວາມສະດວກໃຫ້ສະມາຊິກ ຫຼື ເຈົ້າຂອງສິດ ແລະ ອົງການລິຂະສິດລວມໝູ່ສາກົນ ໃນການເຂົ້າເຖິງ ຂໍ້ມູນເຊັ່ນ: ທີ່ຢູ່, ອີເມວ, ອະທິບາຍລະອຽດໄລຍະເວລາ ແລະ  ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ.

### ມາດຕາ 22~~21~~ ພັນທະຂອງອົງການລິຂະສິດລວມໝູ່

ອົງການລິຂະສິດລວມໝູ່ມີພັນທະດັ່ງນີ້:

1. ປະຕິບັດໜ້າທີ່ຢ່າງ ຊື່ສັດ, ໂປ່ງໃສ, ຍຸຕິທຳ ບໍ່ເລືອກປະຕິບັດຕໍ່ສະມາຊິກຂອງຕົນ, ລວມເຖິງການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ສົ່ງບົດລາຍງານການເຄື່ອນໄຫວປະຈຳປີ ແລະ ບົດລາຍງານການເງິນປະຈຳປີ ທີ່ໄດ້ຮັບຮອງຈາກບໍລິສັດກວດສອບບັນຊີ ຕໍ່ກົມຄຸ້ມຄອງຊັບສິນທາງປັນຍາ ບໍ່ເກີນວັນທີ 20 ເດືອນ ທັນວາ ໃນແຕ່ລະປີ ເພື່ອໃຫ້ກົມຮັບຊາບ.

3. ເປີດເຜີຍ ແລະ ລາຍງານຂໍ້ມູນ ກ່ຽວກັບບົດລາຍງານການເຄື່ອນໄຫວປະຈຳປີ ແລະ ບົດລາຍງານການເງິນປະຈຳປີ ທາງເອເລັກໂຕຼນິກ ໃຫ້ແກ່ສະມາຊິກຮັບຊາບ.

4. ຈັດກອງປະຊຸມປະຈຳປີຂອງສະມາຊິກ ເພື່ອສະຫຼຸບການຈັດຕັ້ງປະຕິບັດວຽກງານໃນໜຶ່ງປີທີ່ຜ່ານມາ ແລະ ວາງແຜນດຳເນີນງານໃນປີຕໍ່ໄປ;

5. ຈັດກອງປະຊຸມໃຫຍ່ ທຸກໆຫ້າປີ ເພື່ອດຳເນີນການເລືອກຕັ້ງຄະນະບໍລິຫານງານຊຸດໃໝ່;

6. ເຊີນຜູ້ຕາງໜ້າຂອງກົມຄຸ້ມຄອງຊັບສິນທາງປັນຍາ ເຂົ້າຮ່ວມກອງປະຊຸມປະຈຳປີ ແລະ ກອງປະຊຸມໃຫຍ່ ໃນຖານະຜູ້ສັງເກດການ;

7. ປະຕິບັດຕາມລະບຽບການຂອງກົມຄຸ້ມຄອງຊັບສິນທາງປັນຍາ ທີ່ວາງອອກເປັນແຕ່ລະໄລຍະ;

8. ສ້າງກິດຈະກຳທີ່ສົ່ງເສີມການປະດິດຄິດແຕ່ງ ແລະ ກິດຈະກຳອື່ນໆ ທາງສັງຄົມ;

9. ຮ່ວມມືກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ໃນການສົ່ງເສີມ ແລະ ພັດທະນາລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

10. ປະຕິບັດໜ້າທີ່ອື່ນໆ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ V

## ຂໍ້ຫ້າມ

### ມາດຕາ 23~~22~~ ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ສົ່ງກົດຂວາງ ຫຼື ຂັດຂວາງ ການເຄື່ອນໄຫວວຽກງານຂອງພະນັກງານ ໃນການຈັດຕັ້ງປະຕິບັດວຽກງານຂອງອົງການລິຂະສິດລວມໝູ່;

2. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງກັບອົງການລິຂະສິດລວມໝູ່;

3. ນຳໃຊ້ເອກະສານປອມແປງ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 24~~23~~ ຂໍ້ຫ້າມ ສຳລັບອົງການລິຂະສິດລວມໝູ່

ຫ້າມອົງການລິຂະສິດລວມໝູ່ ມີພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະກຳ ທີ່ບໍ່ສອດຄ່ອງກັບກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ບໍ່ໄດ້ຮັບອະນຸຍາດ ຈາກກົມຄຸ້ມຄອງຊັບສິນທາງປັນຍາ;

2. ອະນຸຍາດ ໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນໃບອະນຸຍາດສ້າງຕັ້ງເປັນອົງການລິຂະສິດລວມໝູ່;

3. ນຳໃຊ້ໃບອະນຸຍາດສ້າງຕັ້ງເປັນອົງການລິຂະສິດລວມໝູ່ ທີ່ໝົດອາຍຸ;

4. ເຈດຕະນາ ສະໜອງ ເອກະສານ, ຂໍ້ມູນ, ຫຼັກຖານ, ຄຳຊີ້ແຈງ, ຄຳໂຕ້ແຍ້ງ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງໃຫ້ກົມຄຸ້ມຄອງຊັບສິນທາງປັນຍາ;

5. ເປັນຜູ້ຕາງໜ້າໃຫ້ແກ່ຄູ່ກໍລະນີ ທີ່ມີຂໍ້ຂັດແຍ່ງກັບສະມາຊິກຂອງຕົນ;

6. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍ ຫຼື ໃຊ້ອຳນາດທີ່ບໍ່ເປັນທຳຕໍ່ຜູ້ອື່ນ;

7. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງສະມາຊິກ, ຜູ້ນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດ;

8. ວ່າຈ້າງພະນັກງານຄຸ້ມຄອງທີ່ເຮັດວຽກໃນຂົງເຂດຊັບສິນທາງປັນຍາ ຢູ່ ສປປ ລາວ ເປັນພະນັກງານຂອງ ອົງກອນລິຂະສິດລວມໝູ່;

9. ມີພຶດຕິກຳອື່ນ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 25~~24~~ ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ ແລະ ປອມແປງເອກະສານ;

3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກຳທີ່ລະເມີດກົດໝາຍ ແລະ ລະບຽບການ;

4. ນຳໃຊ້ເອກະສານປອມແປງ, ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ ຫຼື ທຳລາຍເອກະສານ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ VI
## ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານອົງການລິຂະສິດລວມໝູ່

**ມາດຕາ 26~~25~~ ການຄຸ້ມຄອງວຽກງານອົງການລິຂະສິດລວມໝູ່**

ກົມຄຸ້ມຄອງຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຈັດຕັ້ງປະຕິບັດຄຸ້ມຄອງ ວຽກງານກ່ຽວກັບອົງການລິຂະສິດລວມໝູ່.

**ມາດຕາ 27~~26~~ ສິດ ແລະ ພັນທະ ຂອງກົມຄຸ້ມຄອງຊັບສິນທາງປັນຍາ**

ກົມຄຸ້ມຄອງຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານ ອົງການລິຂະສິດລວມໝູ່ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ພິຈາລະນາ ອອກ, ຕໍ່ອາຍຸ, ໂຈະ, ຍົກເລີກ ໃບອະນຸຍາດ ສ້າງຕັ້ງເປັນອົງການລິຂະສິດລວມໝູ່;

3. ຮັບຮອງເອົາຄະນະບໍລິຫານງານ ແລະ ກົດລະບຽບຂອງອົງການລິຂະສິດລວມໝູ່;

4. ຮັບຮອງເອົາອັດຕາການຈັດເກັບຄ່າລິຂະສິດ;

5. ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານອົງການລິຂະສິດລວມໝູ່ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

6. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ລວມທັງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານອົງການລິຂະສິດລວມໝູ່ ໃຫ້ສັງຄົມຮັບຊາບ ໃນຂອບເຂດທົ່ວປະເທດ;

7. ກ່າວເຕືອນ, ສຶກສາອົບຮົມ ຕໍ່ອົງການລິຂະສິດລວມໝູ່ ທີ່ລະເມີດຂໍ້ຕົກລົງ ສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

8. ປະຕິບັດສິດ ແລະ ນຳໃຊ້ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 28~~27~~ ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກ ສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 29~~28~~ ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນສີ່ສິບຫ້າວັນ ແລະ ໄດ້ລົງໃນຈົດໝາຍເຫດລັດຖະການ

**ລັດຖະມົນຕີ**